ໃນປີ 2004 ອົງການ ຍູເນສໂກ ໃນພາກພື້ນ ອາຊີ ແລະ ປາຊີຟິກໄດ້ຮັບລາງວັນເພື່ອການອານຸລັກມໍລະດົກທາງວັດທະນະທໍາ.

ກ່ຽວກັບລາງວັນ

ມໍລະດົກທາງວັດທະນະທໍາຫຼາຍແຫ່ງ ໃນພູມີພາກອາຊີ ແລະ ປາຊີຟິກຕົກຢູ່ໃນສະພາບເຊື່ອມໂຊມ. ເນື່ອງຈາກອາຄານແລະສະຖານທີ່ສ່ວນໃຫຍ່ຢູ່ພາຍໃຕ້ກໍາມະສິດຂອງເອກກະຊົນ. ດັ່ງນັ້ນ, ທັງບຸກຄົນ ແລະ ພາກເອກກະຊົນ ຈຶ່ງມີບົດບາດ ສໍາຄັນທີ່ສຸດ ໃນການຟື້ນຟູອະນຸລັກສິ່ງປຸກສ້າງທາງປະຫວັດສາດ ເລົ່ານີ້.

ອົງການຍູເນສໂກມີຕວາມຕ້ອງການສະໜັບສະໜູນ ແລະ ສົ່ງເສີມໃຫ້ພາກເອກກະຊົນມີສ່ວນຮ່ວມ ແລະ ໃຫ້ຄວາມມືກັບພາກລັດ ໃນການອະນຸລັກມໍລະດົກທາງວັດທະນະທໍາໃນພູມີພາກເພື່ອປະໂຫຽດຕໍ່ຄົນໃນລຸ້ນປະຈຸບັນ ແລະ ອານາຄົດ.

ເລີ້ມແຕ່ປີ 2000 ເປັນຕົ້ນມາ, ລາງວັນເພື່ອການອະນຸລັກມໍລະດົກທາງວັດທະນະທໍາ ແຫ່ງພາກພື້ນ ອາຊີ ແລະ ປາຊີຟິກ ຂອງອົງການ ຍູເນສໂກ ໄດ້ຍົກຍ້ອງຄວາມສໍາເລັດຂອງບຸກຄົນ ແລະ ອົງການເອກກະຊົນໃນການປະຕິສັງຂອນ ອາຄານ ແລະ ສິ່ງກໍ່ສ້າງ ທີ່ເປັນມໍລະດົກອັນຊົງຄຸນຄ່າໃນພູມີພາກນີ້.

ໃນປີ 2005, ອົງການຍູເນສໂກໄດ້ລິເລີ້ມລາງວັນພິເສດ ຈູຣີ ຄອມເມນເດຊັນ ຟໍ ອິນໂນເວຊັນ (Jury Commendation for Innovation) ສໍາລັບສິ່ງປຸກສ້າງ ໃໝ່ທີ່ມີຄວາມໂດດເດັ່ນດ້ານການອອກແບບທີ່ປະສົມປະສານສະຖາປັດຕະຍາກໍາຮ່ວມສະໄໝກັບສະພາບການທາງປະຫວັດສາດໄດ້ເປັນຢ່າງດີ.

ເລີ້ມແຕ່ປີ 2000 ເປັນຕົ້ນມາ, ມີໂຄງການອະນຸລັກທີ່ເຂົ້າຮ້ວມ ການປະກວດທັງໝົດ 556 ໂຄງການ ຈາກ 24 ປະເທດ. ໃນນັ້ນ ມີທັງໝົດ 160 ໂຄງການໄດ້ຮັບລາງວັນແບບຢ່າງການອະນຸລັກ ແລະ ມີ 8 ໂຄງການໄດ້ຮັບລາງວັນພິເສດ ຈູຣີ ຄອມເມນເດຊັນ ຟໍ ອິນໂນເວຊັນ.

ໂຄງການທີ່ໄດ້ຮັບລາງວັນແມ່ນຫຼາກຫຼາຍ ລວມທັງ ອາຄານທີ່ຢູ່ອາໄສ ໄປຈົນເຖິງພະລາດ ຊະວັງ. ຫຼາຍປີຜ່ານມາ, ໂຄງການເລົ່ານີ້ສະແດງໃຫ້ເຫັນ ຄວາມເຄື່ອນໄຫວ ແລະ ວິວັດທະນາການ ຂອງການອະນຸລັກ ມໍລະດົກທາງວັດທະນະທຳໃນພູມິພາກອາຊີ ແລະ ປາຊີຟິກ ມີການຂະຫຍາຍຕົວເພີ້ມຂຶ້ນ.

ລາງວັນເພື່ອການອະນຸລັກມໍລະດົກທາງວັດທະນະທຳ ໄດ້ວາງບັນທັດຖານ ທາງດ້ານເທັກນິກ ແລະ ທາງດ້ານດ້ານສັງຄົມ ໃນຂົງເຂດອາຊີ ແລະ ປາຊີຟິກ. ໂຄງການທີ່ໄດ້ຮັບລາງວັນເປັນແຮງບັນດານໃຈສົ່ງເສີມໃຫ້ບຸກຄົນ ແລະ ພາກເອກກະຊົນ ມີຄວາມສົນໃຈທາງດ້ານການອະນຸລັກແຫຼ່ງມໍລະດົກທາງວັດທະນະທຳເພີ້ມຂຶ້ນ.